# ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດ ທີ 9 ມີນາ 2008 ( 03-9-2008 )

---

## <u>ດຳຣົງຊີວິດ 3:16 - ຄືເຮືອນທີ່ພຣະເຈົ້າສະຖິດຢູ່</u>

**<u>ຂໍ້ພຣະຄັມພີໃນບົດຮຽນ:</u>** ( 1: ໂກຣິນໂທ 3:9-17; 6:12-13,18-20 )

**<u>ຄຳຖາມຊີວິດ:</u>** ແມ່ນຫຍັງທີ່ຂ້າພະເຈົ້າໄດ້ເຮັດເພື່ອພຣະເຈົ້າຈະໄດ້ສະຖິດຢູ່ເຫມືອນກັບຢູ່ໃນເຮືອນຫລືຢູ່ໃນຊີວິດຂອງຂ້າພະເຈົ້າເອງແລະໃນໂບດດ້ວຍ?

**<u>ຄວາມຈິງໃນພຣະຄັມພີ:</u>** ການເກັບກຳແລະການສ່ວນຕົວແລ້ວ, ຜູ້ທີ່ເຊື່ອແມ່ນມີພຣະວິນຍານບໍຣິສຸດຊົງສະຖິດຢູ່ນຳພວກເຂົາ; ເພື່ອເຂົາຈະໄດ້ເຮັດແລະທຳທຸກຢ່າງໃຫ້ເປັນທີ່ຖວາຍກຽດແດ່ພຣະເຈົ້າ.

**<u>ຜົນສະທ້ອນຕໍ່ຊີວິດ:</u>** ບົດຮຽນນີ້ໄດ້ແຕ່ງຂຶ້ນເພື່ອຊ່ວຍທ່ານໃຫ້ດຳຣົງຊີວິດຢູ່ໃນແຕ່ລະວັນດ້ວຍຄວາມຫມັ້ນໃຈແລະຄວາມຫວັງທີ່ພຣະເຈົ້າໄດ້ຊົງປະທານໃຫ້ໂດຍ:

* ຜູ້ທີ່ເຊື່ອຈະໄດ້ຮູ້ເຖິງພຣະປະສົງຂອງພຣະເຈົ້າທີ່ພຣະອົງຊົງມີໃຫ້ພວກເຂົາໄວ້ແລ້ວ;
* ຈະໄດ້ສະແດງໃຫ້ເຫັນເຖິງການກະທຳຂອງທ່ານເອງແລະໂບດຂອງທ່ານວ່າຈະເຮັດຢ່າງໃດຈຶ່ງຈະເປັນທີ່ຖວາຍກຽດໃຫ້ແກ່ພຣະເຈົ້າ.

### <u>ສຶກສາພຣະຄັມພີ</u>

ຫລັງຈາກການກໍ່ສ້າງຫໍຄອຍຂອງ ປີຊາ ທີ່ຢູ່ນະຄອນປີຊາ, ທີ່ປະເທດອີຕາລີມາບໍ່ດົນ, ໃນເດືອນ 8 ປີ 1173, ຜູ້ຄົນເລີ້ມສັງເກດເຫັນມັນເລີ້ມອຽງລົງ. ຄວາມອຽງລົງຂອງຫໍຄອຍນັບວ່າຫລາຍຂຶ້ນທຸກໆປີ. ພວກນັກວິຊາການໄດ້ຖືກເອີ້ນມາເພື່ອຄົ້ນຄວ້າຫາເຫດຜົນແລະໄດ້ພົບວ່າພື້ນຖານການສ້າງຫໍຄອຍມີຂໍ້ຜິດພາດຈຶ່ງເຮັດໃຫ້ເກີດບັນຫາ. ເມື່ອຫລາຍສັຕວັດຜ່ານໄປກໍບໍ່ສາມາດທີ່ຈະແກ້ໄຂບັນຫາຫໍຄອຍທີ່ອຽງໄປທາງທິດຕາເວັນຕົກໄດ້. ແລະໃນທີ່ສຸດ, ການຄົ້ນຫາເພື່ອທີ່ຈະຮັກສາໃຫ້ຫໍຄອຍ ປີຊານີ້ຄົງຕົວຢູ່ເທົ່ານີ້ບໍ່ໃຫ້ພັງທະລາຍລົງກໍສຳເຣັດ, ແລະຄົງສະພາບຕົວຢູ່ຢ່າງນັ້ນແລະປັດຈຸບັນນີ້ກໍເລີຍເອີ້ນຊື່ວ່າ ຫໍຄອຍອຽງປີຊາແລະຄວາມຫມາຍກໍແມ່ນແທ້ຕາມຊື່ຂອງມັນ.

ການກໍ່ສ້າງແມ່ນຕ້ອງການພື້ນຖານທີ່ຫມັ້ນຄົງແຫນ້ນແກ່ນແລະປອດພັຍ, ພວກເຮົາຕ້ອງການພື້ນຖານຈິດວິນຍານທີ່ເຂັ້ມແຂງເຊັ່ນດຽວກັນ. ໃນບົດຮຽນບົດນີ້, ອັຄສາວົກໂປໂລໄດ້ອະທິບາຍເຖິງການຊົງນຳຂອງພຣະວິນຍານບໍຣິສຸດໃຫ້ຊ່ວຍພວກເຮົາໃຫ້ເຂົ້າໃຈການສ້າງພື້ນຖານຊີວິດຂອງພວກເຮົາຢູ່ເທິງພື້ນຖານອັນຫມັ້ນຄົງ ແລະນັ້ນແມ່ນ-ພຣະເຢຊູຄຣິດ. ເມື່ອພວກເຮົາເຮັດເຊັ່ນນັ້ນ, ເຮົາກໍຈະກາຍເປັນວິຫານຫລືບ່ອນນະມັສການພຣະເຈົ້າທີ່ສາມາດຖວາຍກຽດໃຫ້ແກ່ພຣະເຈົ້າຢ່າງແທ້ຈິງ. ຄຳເວົ້າຂອງໂປໂລທີ່ໄດ້ບອກໃຫ້ແກ່ໂບດນັ້ນແມ່ນໄດ້ນຳມາໃຊ້ໄດ້ກັບຜູ້ທີ່ເຊື່ອທຸກຄົນເຫມືອນກັນ, ດັ່ງໃນບົດຮຽນຈະໄດ້ສອນຄົນໃນໂບດທັງຫມົດແລະແຕ່ລະຄົນອີກດ້ວຍ.

### 1. <u>ຢືນຢູ່ເທິງພື້ນຖານອັນດຽວ.</u> ( ໂກຣິນໂທ. 3:9-11 )

ໃນພຣະຄັມພີໃຫມ່, ຄຳວ່າໂບດຈະຫມາຍເຖິງກຸ່ມຄົນທີ່ມີຄວາມເຊື່ອໃນເຂດນັ້ນ, ແຕ່ແທ້ຈິງແລ້ວກໍແມ່ນຫມາຍເຖິງຜູ້ທີ່ເຊື່ອຢູ່ທົ່ວທຸກບ່ອນ- ຊຶ່ງເປັນກາຍຂອງພຣະຄຣິດທີ່ບໍ່ມີຂອບເຂດ( ອຟຊ. 3:21 ). ສິ່ງນີ້ງທີ່ໂປໂລໄດ້ໃຫ້ເປັນຈຸດສົນໃຈຂອງຊາວເມືອງໂກຣິນໂທຄືຜູ້ທີ່ມີຄວາມເຊື່ອທຸກຄົນມີສິດເທົ່າທຽມກັນໃນການເປັນພາກສ່ວນໃນຮ່າງກາຍດຽວກັນຂອງພຣະຄຣິດ, ເທົ່າກັນກັບໂບດ ( 1ກຣທ. 12: 12, 27 ).

*ສະແດງອອກໃນທາງໃດທີ່ວ່າໂບດເປັນກາຍຂອງພຣະຄຣິດ?*

ອັຄສາວົກໂປໂລໄດ້ພົບໂບດທີ່ຢູ່ໃນເມືອງໂກຣິນໂທໃນການອອກໄປປະກາດຄັ້ງທີສອງ ( ກຈກ 18:1-17 ) ແລະເພິ່ນຄົງຈະຂຽນພຣະທັມ 1 ກຣທ ສົ່ງໄປໃຫ້ພວກເຂົາຈາກເມືອງເອເຟໂຊໃນການອອກໄປປະກາດເປັນຄັ້ງທີສາມ. ບັນຫາໃຫຍ່ອີກບັນຫານຶ່ງທີ່ໂປໂລໄດ້ເຕືອນພວກທີ່ເຊື່ອທີ່ຢູ່ເມືອງໂກຣິນໂທນັ້ນ ກໍຄືການແຕກແຍກໃນກຸ່ມຜູ້ທີ່ເຊື່ອດ້ວຍກັນ ( 1ກຣທ. 1:10-12 ). ໂປໂລໄດ້ໃຫ້ຄຳແນະນຳໃນເຣື່ອງການປອງດອງກັນຢູ່ໃນສີ່ບົດເລີ້ມຕົ້ນຂອງພຣະຄັມພີບົດນີ້ແລ້ວແລະກໍມີອີກຢູ່ໃນບົດອື່ນໆ ອີກນຳ.

ໃນຂໍ້ທີ 9, ໂປໂລໄດ້ໃຫ້ໃຊ້ຮູບພາບສົມທຽບໃນສິ່ງທີ່ກ່ຽວຂ້ອງກັບການອອກໄປປະກາດຂອງເພິ່ນ. ໂປໂລແລະອະໂປໂລ**ເປັນເພື່ອນຜູ້ຮັບໃຊ້ພຣະເຈົ້ານຳກັນ**ຢູ່ທີ່ໂກຣິນໂທ. ພຣະເຈົ້າໄດ້ໃຊ້ທ່ານທັງສອງໃຫ້ນຳຄົນມາສູ່ຄວາມລອດພົ້ນ. ຜູ້ທີ່ເຊື່ອໃນໂກຣິນໂທແມ່ນໄດ້ກາຍເປັນເຫມືອນທົ່ງ**ນາ**ແລະເປັນ**ຕຶກ**ຂອງພຣະເຈົ້າດ້ວຍ. ທົ່ງ**ນານີ້** ໄດ້ຖືກເອີ້ນໃຫ້ມາປູກແລະຫົດນ້ຳທີ່ເຮັດໃຫ້ໂບດທີ່ໄດ້ກໍ່ສ້າງໄວ້ໃນໂກຣິນໂທໄດ້ຈະເຣີນໃຫຍ່ຂຶ້ນ. ທັງສອງຢ່າງນີ້ແມ່ນເປັນພາກສ່ວນທີ່ສຳຄັນຄືຈະສາມາດອອກຜົນຫລາຍ.

ໂປໂລໄດ້ບອກວ່າ**ເພິ່ນເປັນນາຍຊ່າງຜູ້ຊຳນານ,** ໂປໂລແລະຜູ້ອອກໄປປະກາດຂ່າວປະເສີດຄົນອື່ນໆ , ເຊັ່ນອະໂປໂລ, ແມ່ນເປັນຜູ້ສ້າງແລະເອີ້ນຜູ້ທີ່ເຊື່ອແມ່ນຄົນທີ່ເຊື່ອຢູ່ໂກຣິນໂທເປັນ**ຕຶກ**. ສາເຫດທີ່ໂປໂລໄດ້ພົບໂບດທີ່ຢູ່ໃນໂກຣິນໂທນັ້ນເພິ່ນຈຶ່ງໄດ້ເອີ້ນຕົວເອງວ່າເປັນນາຍຊ່າງທີ່ຊຳນານ. ດ້ວຍພຣະຄຸນຂອງພຣະເຈົ້າທີ່ໂປໂລໄດ້ມີໂອກາດເທສນາສັ່ງສອນຢູ່ທີ່ນັ້ນ, ແລະກໍໄດ້ວາງຮາກຖານທີ່ຫມັ້ນຄົງໄວ້ທີ່ຜູ້ປະກາດທັງຫລາຍຈະໄດ້ດຳເນີນວຽກງານຕໍ່ໄປ. ໂປໂລໄດ້ກ່າວຢ້ຳອີກວ່າ**ພຣະຄຣິດຊົງເປັນຜູ້ວາງຮາກຖານ**ໄວ້ແລ້ວ, ແລະ**ຈະບໍ່ມີຜູ້ໃດສາມາດກໍ່ສິ່ງອື່ນໃດໃສ່ເທິງນັ້ນໄດ້.** ແລະໂປໂລກໍໄດ້ເລີ້ມໂບດທີ່ໂກຣິນໂທ, ຮູ້ດີວ່າພຣະເຢຊູຊົງເປັນພື້ນຖານ. ພຣະອົງຊົງເປັນສີສະແລະຮ່າງກາຍ ( ອຟຊ 5:23; ຄລຊ. 1:18 ) ແລະເປັນພື້ນຖານຂອງໂບດ, ຜູ້ທີ່ເຊື່ອສາມາດຖວາຍກຽດແກ່ພຣະເຈົ້າດ້ວຍການສະແດງຄວາມເຊື່ອທີ່ມີໃນພຣະເຢຊູກໍຄືພຣະຜູ້ຊ່ວຍໃຫ້ລອດແລະເປັນພຣະຜູ້ເປັນເຈົ້າ.

## ຂ. <u>ສ້າງດ້ວຍການງານທີ່ຖາວອນ.</u> ( 1 ກຣທ. 3:12-17 )

ການສ້າງໂບດຢູ່ເທິງພື້ນຖານທີ່ຜິດຈະເກີດມີອັນຕະລາຍແລະຜົນອອກມາໃຫ້ເຫັນເວລາຖືກທົດສອບໃນວັນພິພາກສາ. ໂປໂລໄດ້ອະທິບາຍເຖິງພື້ນຖານທີ່ແຂງແຮງກໍຄືພວກ**ຄຳ, ເງິນ, ຫີນພອຍທີ່ມີລາຄາແພງ;** ແລະພື້ນຖານທີ່ຜິດຄືສາມາດທຳລາຍໄດ້ງ່າຍເຊັ່ນ**ໄມ້, ຫຍ້າແຫ້ງຫລືເຟືອງ.** ພຣະເຈົ້າຈະຊົງພິພາກສາ**ການງານ**ຂອງພວກເຮົາທີ່ດຳເນີນການກໍ່ສ້າງໃສ່ເທິງພຣະເຢຊູທີ່ຊົງເປັນພື້ນຖານແລະດ້ວຍຜ່ານການ**ທົດສອບ**ດ້ວຍ**ໄຟ** ແລະຍັງຄົງຢືນຢັດຢູ່ໄດ້ຍ້ອນຄຸນພາບທີ່ແຂງຂອງໂລຫະແລະຫີນທີ່ມີຄ່າ. **ແຕ່ໄມ້, ຫຍ້າແຫ້ງແລະເຟືອງ**ຈະຖືກເຜົາໄຫມ້ເສັຽ. ພຣະເຈົ້າຈະຊົງປະທານລາງວັນໃຫ້ຜູ້ທີ່ເປັນຜູ້ປະກາດຢູ່ໃນໂບດ-ຖ້າຫາກວ່າພວກເພິ່ນຫາກວາງຮາກຖານທີ່ຖືກຕ້ອງແລ້ວ. **ຖ້າການງານຂອງຜູ້ໃດຫາກຖືກເຜົາໃຫມ້ໄປ**ຜູ້ນັ້ນກໍຈະຂາດຄ່າຕອບແທນ, ບໍ່ໄດ້ເສັຽຄວາມລອດພົ້ນ, **ຈະລອດແຕ່**ເຫມືອນດັ່ງລອດຈາກໄຟ.

ກະແຈສຳຄັນໃນການປະກາດໃຫ້ແກ່ຄົນຂອງພຣະເຈົ້າຄື " ຈົ່ງແນມເບິ່ງພຣະເຢຊູ, ທີ່ເປັນແຫລ່ງຄວາມເຊື່ອທີ່ດີເລີດຂອງເຮົາ " ( ຮບ. 12:2 ). ໃນເວລາໃດທີ່ພວກເຮົາບໍ່ມີໃຈຈົດຈໍ່ຕໍ່ພຣະອົງ, ງານການປະກາດແລະກໍ່ຈະອ່ອນລົງຍ້ອນ ອາລົມປ່ຽນແປງ, ຄວາມເຫັນແກ່ຕົວ,ແລະ ( ຈະຄືກັນກັບຄົນທີ່ຢູ່ໂກຣິນໂທ ) ຊຶ່ງເກີດແຕກແຍກກັນ. ພຣະເຈົ້າກໍຈະຍັງຄົງໃຊ້ພວກເຮົາ, ແຕ່ຈະບໍ່ໄດ້ຮັບຄ່າຕອບແທນຈາກການງານນັ້ນ.

ມາເຖິງຈຸດນີ້, ໂປໂລບໍ່ໄດ້ບອກວ່າແມ່ນວັດຖຸສິ່ງໃດທີ່ໃຊ້ສ້າງທີ່ມີຢູ່ໃນຈິດໃຈຂອງເພິ່ນ, ແຕ່ໄດ້ອະທິບາຍການສົມທຽບກັບວິຫານທີ່ກຸງເຢຣູຊາເລັມທີ່ມີສ່ວນສະແດງຄວາມສຳຄັນທີ່ສຸດໃນການປະກອບພິທີທາງສາສນາ ແລະຊີວິດການເປັນຢູ່ຂອງພວກຄົນຢິວ, ແລະໂປໂລໄດ້ສົມທຽບໃຫ້ເຫັນເຖິງວິຫານທີ່ກໍ່ສ້າງຢູ່ເທິງພື້ນຖານຂອງພຣະເຢຊູຄຣິດກໍຄືເປັນວິຫານໃຫມ່ ( **ທີ່ນະມັສການ** ) ຂອງພຣະເຈົ້າຊຶ່ງຍັງຄົງດຳເນີນການກໍ່ສ້າງຕໍ່ໄປ. ກໍຄືວິຫານໃນອິສຣາເອັນສມັຍບູຮານ.ທີ່ເຄີຍເປັນ**ບ່ອນສະຖິດຢູ່ຂອງພຣະເຈົ້າ**( 1 ພົງກະສັດ8:10-11 ), ໃນທຸກວັນນີ້ຄົນຂອງພຣະເຈົ້າກໍຄືວິຫານອັນສັກສິດຂອງພຣະເຈົ້າ, ຫມາຍຄວາມວ່າ**ພຣະວິນຍານຂອງພຣະເຈົ້າສະຖິດຢູ່ໃນຊີວິດຂອງພວກເຮົາ,** ນີ້ກໍຄື,

ຜູ້ທີ່ເຊື່ອທັງຫລາຍ, ກໍຢູ່ໃນນີ້, ໂປໂລໄດ້ເຕືອນວ່າຖ້າຜູ້ໃດທຳລາຍພຣະວິຫານຂອງພຣະເຈົ້າ**ພຣະອົງກໍຈະທຳລາຍຜູ້ນັ້ນ**ແລະອີກເຊັ່ນກັນໃຫ້ແນໃສ່ພຣະເຢຊູເປັນພື້ນຖານຂອງວິຫານແລະເຣື່ອງວຽກງານການປະກາດ.

*ແມ່ນຫຍັງທີ່ເປັນຍອດຂອງປະທານທາງດ້ານຈິດວິນຍານຂອງທ່ານ? ທ່ານຝຶກຝົນວິທີໃດ?*

ການປະກາດເປັນວຽກງານທີ່ສັກສິດກໍເພາະວິຫານປຽບເຫມືອນທີ່ສັກສິດເພື່ອນະມັສການພຣະເຈົ້າ( ແຍກຢູ່ຕ່າງຫາກເພື່ອພຣະປະສົງ ). ເມື່ອພວກເຮົາປະກາດໃຫ້ແກ່ຄົນອື່ນໆໂດຍຜ່ານຜູ້ອອກໄປປະກາດ, ຜ່ານກອງປະກາດ, ການເທສນາ, ການສອນ, ດຳຣົງຊີວິດທີ່ມີພຣະເຈົ້າແລະດຳເນີນເຮັດວຽກງານການກໍ່ສ້າງພຣະວິຫານຂອງພຣະອົງ-**ທີ່ນະມັສການຂອງພຣະເຈົ້າ**

**3. <u>ມີຊີວິດທີ່ຖວາຍກຽດແດ່ພຣະເຈົ້າ.</u>** ( 1 ໂກຣິນໂທ. 6:12-13, 18-20 )

ບັນຫາເຣື່ອງການລ່ວງປະເວນີເປັນບັນຫາເກີດຂຶ້ນຢູ່ທີ່ເມືອງໂກຣິນໂທແລະບໍ່ສາມາດຄວບຄຸມໄດ້, ດັ່ງນັ້ນກໍບໍ່ເປັນການປລາດໃຈເລີຍທີ່ບັນຫານີ້ເປັນເຣື່ອງໃຫຍ່ອັນນຶ່ງທີ່ໂປໂລໄດ້ຍົກຂຶ້ນມາໃນພຣະທັມ 1 ກຣທ. ເພິ່ນໄດ້ເຕືອນພວກໂບດທັງຫລາຍໃນຄວາມຫລົງຜິດທີ່ໄດ້ນຳເຂົາໃຫ້ຮ່ວມນະມັສການໃນທາງທີ່ຜິດ ( 1 ກຣທ. 5:12-13 ). ໂປໂລໄດ້ໃຫ້ຄຳຕັກເຕືອນທີ່ແຂງກັບພວກທີ່ເຊື່ອ ເມື່ອເປັນຄວາມກັນຈະນຳພີ່ນ້ອງຂອງຕົນເອງໄປເວົ້າຄວາມຕໍ່ຫນ້າຄົນອະທັມຫລືຈະເວົ້າຄວາມກັນຕໍ່ຫນ້າພີ່ນ້ອງຄຣິດສະຕຽນດ້ວຍກັນ ( 6:1-11 ), ແລະໃນຂໍ້ 12 ເພິ່ນໄດ້ກັບໄປເວົ້າເຖິງເຣື່ອງການຜິດປະເວນີອີກ.

*ມີສິ່ງໃດແດ່ເປັນທີ່ອະນຸຍາດໃຫ້ຄຣິສະຕຽນເຮັດໄດ້ແລະມີສິ່ງອັນໃດອີກແດ່ທີ່ບໍ່ໄດ້ອະນຸຍາດໃຫ້ເຮັດ?*

ໂປໂລໄດ້ເວົ້າເຖິງເຣື່ອງດຽວກັນທີ່ເກີດທີ່ໂກຣິນໂທເຖິງສອງເທື່ອ (ຂໍ້ 12 ), ຄືໄດ້ໃຫ້ຮູ້ເຖິງຄຳສັນຍາດັ່ງນີ້: "**ຂ້າພະເຈົ້າຈະເຮັດສິ່ງສາລະພັດກໍໄດ້.**" ຍ້ອນສາເຫດທີ່ຄຶດດັ່ງນີ້ຈຶ່ງເຮັດໃຫ້ຄົນທີ່ເຊື່ອຢູ່ໂກຣິນໂທເຮັດຜິດບາບແລະເຮັດໃຫ້ຊີວິດຊົ່ວມົວຫມອງ ( ເຮັດຜິດປະເວນີ ) ແລະໃຊ້ ສິດເສຣີພາບໃນທາງທີ່ຜິດ ) ໂປໂລໄດ້ຕອບສນອງບັນຫານີ້ຢ່າງໄວທັງສອງຄັ້ງເຖິງເຣື່ອງທີ່ຈະແກ້ໄຂ. ນຶ່ງ, ພວກເຂົາຄວນຈະຮູ້ວ່າແຕ່**ບໍ່ແມ່ນທຸກສິ່ງທີ່ເຮັດໄດ້ນັ້ນເປັນປໂຍດ.** ເຖິງແມ່ນວ່າຜູ້ທີ່ເຊື່ອມີສິດທີ່ຈະເຮັດສິ່ງໃດສິ່ງນຶ່ງໄດ້ແຕ່ບໍ່ໄດ້ຫມາຍຄວາມວ່າເຂົາຄວນເຮັດ. ຄວນໃຊ້ປັນຍາພິຈາຣະນາໃນການກະທຳທຸກຢ່າງເພື່ອໃຫ້ຫລີກເວັ້ນທີ່ຈະບໍ່ຍອມຢູ່ໃຕ້ອຳນາດຂອງສິ່ງໃດໆ ເລີຍ. ພວກເຮົາມີຄວາມສາມາດທີ່ຈະຄວບຄຸມການກະທຳແລະສິດເສຣີພາບຂອງຕົນເອງໄດ້ເຫມືອນກັນ, ບໍ່ວ່າຈະເກີດໃນກໍຣະນີໃດແລະສະຖານະການຢ່າງໃດ. ພວກເຮົາຈະເຮັດທຸກສິ່ງເພື່ອເປັນທີ່ຖວາຍກຽດແກ່ພຣະເຈົ້າຄືເປັນທີ່ຊ່ວຍໃຫ້ພວກເຮົາມີຊີວິດເພື່ອພຣະອົງບໍ່ໄດ້ເຮັດຕາມຄວາມປາຖນາແລະສິດເສຣີພາບເກີນຂອບເຂດ.

ອີກສິ່ງນຶ່ງຜູ້ເຊື່ອຢູ່ໂກຣິນໂທຄວນຮູ້ວ່າ: "**ອາຫານກໍມີໄວ້ສຳລັບທ້ອງແລະທ້ອງກໍມີໄວ້ສຳລັບອາຫານ**" ຄຣິດສະຕຽນທຸກຄົນຄວນຮັກສາຈິດໃຈທີ່ສຳຜັດທີ່**ພຣະເຈົ້າຈະຊົງສະຖິດຢູ່ນຳທັງສອງພາກ.**

*ເຮັດຢ່າງໃດພຣະວິນຍານບໍຣິສຸດຈຶ່ງຈະສະຖິດຢູ່ໃນທ່ານແລະຊ່ວຍເຫລືອທ່ານ ເພື່ອຖວາຍກຽດໃຫ້ແກ່ພຣະອົງ?*

ອາຫານມີໄວ້ສຳລັບຮ່າງກາຍທີ່ຍັງມີຊີວິດຢູ່ໃນໂລກນີ້, ແຕ່ບໍ່ແມ່ນສຳລັບໂລກທີ່ເປັນຄືນມາໃຫມ່( 15:42-49 ). ຜູ້ເຊື່ອຢູ່ໂກຣິນໂທຄວນຈະຮູ້ອີກວ່າ**ຮ່າງກາຍບໍ່ໄດ້ມີໄວ້ສຳລັບການລ່ວງປະເວນີ ແຕ່ມີໄວ້ສຳລັບແລະເພື່ອພຣະກາຍຂອງພຣະເຈົ້າ.** ທຸກຄົນກໍຕ້ອງການອາຫານຕາມປົກກະຕິ, ແຕ່ພຣະເຈົ້າໄດ້ສ້າງຮ່າງກາຍຂອງເຮົາເພື່ອຄວາມຕ້ອງການທາງເພດສັມພັນທີ່ສະແດງອອກມາກັບສາມີແລະພັລຍາ**ຂອງຕົນເອງ**ເທົ່ານັ້ນ( ປຖມກ. 2:24 ). ໂປໂລໄດ້ເຕືອນ: **ເວັ້ນຈາກການເຮັດຜິດລ່ວງປະເວນີ!** ຄວາມບາບນີ້ບໍ່ໄດ້**ຢູ່ນອກຮ່າງກາຍ**ແຕ່ເປັນການຕໍ່ສູ້ຮ່າງກາຍຂອງຕົນເອງ, ເພາະວ່າຜູ້ທີ່ເຊື່ອແລ້ວການລ່ວງປະເວນີແມ່ນເປັນເຮັດຜິດບາບຕໍ່**ພຣະວິນຍານບໍຣິສຸດທີ່ສະຖິດຢູ່ໃນຕົວຂອງທ່ານເອງ** ( ເຕືອນຜູ້ທີ່ເຊື່ອທັງຫມົດແລະໃນແຕ່ລະຄົນເປັນການສ່ວນຕົວເຮົາເອງອີກ ). ການສະແດງອອກທາງການກະທຳ, ພວກເຮົາສົມຄວນໃຫ້ມີໃນຊີວິດປະຈຳວັນໂດຍການນຳພາຂອງພຣະວິນຍານບໍຣິສຸດ. ແນ່ນອນ, ຮ່າງກາຍນີ້ກໍເປັນຂອງພຣະເຈົ້າຜູ້ຊົງໄດ້ໄຖ່ຄື-ພຣະຄຣິດສິ້ນພຣະຊົນ-ເພື່ອພວກເຮົາຈະສາມາດ**ຖວາຍກຽດແກ່ພຣະເຈົ້າ** ແມ່ນແຕ່ເຣື່ອງຮ່າງກາຍຂອງເຮົາເອງ. ທຸກໆ ສິ່ງທີ່ເຮົາເຮັດໃນຮ່າງກາຍຂອງເຮົາ ( ເຣື່ອງເພດສັມພັນສ່ວນຕົວ) ກໍຄວນເຮັດໃຫ້

ນຳມາເພື່ອຖວາຍກຽດແກ່ພຣະເຈົ້າດ້ວຍ.

## ບົດຮຽນຊີວິດ

ການງານຂອງພວກເຮົາເພື່ອພຣະເຈົ້າຈະເຣັດໃຫ້ຫລາຍທີ່ສຸດບໍ່ແມ່ນພຽງແຕ່ເຣັດລໍຖ້າເວລາທີ່ຈະທົດສອບເທົ່ານັ້ນ. ມັນຈະເປັນຜົນເຖິງຊີວິດອັນຕລອດໄປເປັນນິດ, ແຕ່ຖ້າເຮົາພຽງແຕ່ຍັງຄົງດຳເນີນການກໍ່ສ້າງເທິງພື້ນຖານທີ່ຖືກຕ້ອງ, ຄືພຣະເຢຊູຄຣິດ. ພຣະອົງພຽງຜູ້ດຽວທີ່ເປັນພື້ນຖານໃຫ້ຊີວິດແລະໂບດຂອງເຮົາ. ດັ່ງນັ້ນຜູ້ທີ່ເຊື່ອຈະເຣັດຢ່າງໃດຈຶ່ງຈະຖືກຕ້ອງກັບພື້ນຖານທີ່ພຣະເຢຊູເປັນໃຫ້ແກ່ໂບດທັງຫລາຍ? ຜູ້ທີ່ເຊື່ອສົມຄວນ:

* ຂອບພຣະຄຸນພຣະເຈົ້າທີ່ໄດ້ປະທານໃຫ້ພຣະເຢຊູເປັນພື້ນຖານຄວາມເຊື່ອ, ທັງສ່ວນຕົວແລະໂບດດ້ວຍ.
* ຈົ່ງຂຽນຂໍ້ຄວາມລົງເປັນລາຍລະອຽດມີວິທີທາງໃດແດ່ທີ່ທ່ານຈະຮັບໃຊ້ພຣະເຈົ້າຢູ່ໃນໂບດຫລືນອກໂບດຂອງທ່ານ, ແລະພິຈາຣະນາເບິ່ງວ່າຍັງມີສິ່ງໃດແດ່ທີ່ທ່ານຈະເຣັດ ແຕ່ຍັງບໍ່ໄດ້ເຣັດເທື່ອ?
* ຈົ່ງຄິດເບິ່ງກ່ຽວກັບການສະແດງອອກແລະມີອັນໃດທີ່ສາມາດເຣັດໃຫ້ທ່ານມີກຳລັງໃຈຂື້ນໃນການຮັບໃຊ້, ແລະຈົ່ງຂໍໃຫ້ພຣະເຈົ້າຊ່ວຍໃຫ້ທ່ານໄດ້ຮູ້ຈັກໃນການຮັບໃຊ້ພຣະອົງ ເພື່ອໃຫ້ມີເຫດຜົນທີ່ຖືກຕ້ອງ-ບໍ່ແມ່ນເພື່ອກຽດແລະຄວາມຕ້ອງການຂອງຕົວເອງ.
* ຈົ່ງຊອກຫາທາງທີ່ຈະສາມາດເຣັດເພື່ອຖວາຍກຽດແກ່ພຣະເຈົ້າ ໂດຍຜ່ານການສະແດງອອກໃນຊີວິດປະຈຳວັນຂອງທ່ານ.

ປີຣະມິດທີ່ປະເທດອີຢິບເປັນປີຣະມິດທີ່ເກົ່າແກ່ແລະໃຫຍ່ທີ່ສຸດຢູ່ໃນໂລກ, ແລະຍັງຄົງຕັ້ງໂດດເດັ່ນຢູ່ທີ່ນັ້ນມາຫລາຍກວ່າສີ່ພັນປີແລ້ວ. ເມື່ອເວລາທີ່ສ້າງປີຣະມິດພື້ນຖານຂອງມັນແມ່ນຄົນງານໄດ້ເຈາະຕັດກ້ອນຫີນຈາກພູເຂົາທີ່ຢູ່ໃກ້ນັ້ນແລະໄດ້ໃຊ້ວິທີລາກແກ່ພວກມັນຂ້າມທະເລຊາຍມາເພື່ອໃຊ້ກໍ່ສ້າງ ແລະຈອດຕິດກັນສ້າງເປັນພື້ນຖານຂື້ນ. ໃຊ້ເວລາຫລາຍກວ່າ 20 ປີໃນການກໍ່ສ້າງຈົນປີຣະມິດສ້າງສຳເຣັດລົງ. ປີຣະມິດມີພື້ນຖານທີ່ໝັ້ນຄົງແຂງແກ່ງດ້ວຍຫີນຜາແລະຜ່ານການເວລາເປັນເຄື່ອງທົດສອບຄວາມທົນທານຂອງມັນທີ່ບໍ່ມີສິ່ງອື່ນໃດທຽບທັນໄດ້ໃນປວັດສາດຂອງມະນຸດ.

ການສະແດງອອກຂອງທ່ານແມ່ນກາລເວລາເປັນເຄື່ອງພິສູດແມ່ນບໍ່? ແລະທ່ານໄດ້ສ້າງພື້ນຖານຢູ່ເທິງພຣະເຢຊູຄຣິດ, ແລະເປັນພື້ນຖານຈິດວິນຍານທີ່ໝັ້ນຄົງແໜ້ນໜາແລ້ວບໍ່?

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ wwwLSBF.org by AP